# ສັງລວມເນື້ອໃນຄວາມຈິງກ່ຽວກັບພະຍາດຕັບອັກເສບ B

ທຸກຢ່າງທີ່ທ່ານຕ້ອງຮູ້ພາຍໃນ 2 ນາທີ ຫຼື ນ້ອຍກວ່ານັ້ນ!

## ພະຍາດຕັບອັກເສບ B ແມ່ນຫຍັງ?

ພະຍາດຕັບອັກເສບ B ເປັນພະຍາດຕັບຕິດຕໍ່ທີ່ຮ້າຍແຮງທີ່ສຸດໃນໂລກ. ມັນເກີດມາຈາກເຊື້ອໄວຣັສຕັບອັກເສບ B (HBV), ເຊິ່ງທໍາຮ້າຍຈຸລັງຕັບ ແລະ ສາມາດນໍາໄປສູ່ໂລກຕັບແຂງ (ແຜເປັນໃນຕັບ), ຕັບລົ້ມເຫຼວ, ຫຼື ມະເຮັງຕັບ.

ຄົນທີ່ມີສຸຂະພາບດີສ່ວນໃຫຍ່ທີ່ຕິດເຊື້ອໃນຜູ້ໃຫຍ່ແມ່ນສາມາດຕໍ່ສູ້ກັບການຕິດເຊື້ອ ແລະ ກໍາຈັດເຊື້ອໄວຣັສອອກຈາກເລືອດຂອງພວກເຂົາ.
ນີ້ອາດຈະໃຊ້ເວລານານເຖິງ 6 ເດືອນ ແລະ ພວກເຂົາສາມາດຕິດເຊື້ອ ໃນຊ່ວງເວລານີ້ໄດ້.
ແຕ່ເດັກເກີດໃໝ່ ແລະ ເດັກນ້ອຍແມ່ນມີຄວາມສ່ຽງສູງທີ່ສຸດໃນການຕິດເຊື້ອຊໍາເຮື້ອ (ຕະຫຼອດຊີວິດ) ຖ້າພວກເຂົາໄດ້ສໍາພັດພະຍາດ HBV.

ປະມານ 5-10% ທີ່ເປັນຜູ້ໃຫຍ່, 30-50% ທີ່ເປັນເດັກ ແລະ 90%
ທີ່ເປັນເດັກນ້ອຍແມ່ນບໍ່ສາມາດຕໍ່ສູ້ກັບເຊື້ອໄວຣັສ ແລະ ຈະກາຍເປັນການຕິດເຊື້ອຊໍາເຮື້ອ. ຜູ້ທີ່ຕິດເຊື້ອຊໍາເຮື້ອສາມາດແຜ່ເຊື້ອໄວຣັດໄປສູ່ຜູ້ອື່ນ (ເຖິງແມ່ນວ່າພວກເຂົາບໍ່ມີອາການ) ແລະ ມີຄວາມສ່ຽງສູງທີ່ຈະເປັນພະຍາດຕັບ ແລະ ມະເຮັງຕັບໃນພາຍຫລັງ.

ສິ່ງທີ່ດີຄືເຊື້ອໄວຣັດຕັບອັກເສບ B ສາມາດປ້ອງກັນໄດ້ດ້ວຍ ວັກຊີນປ້ອງກັນທີ່ມີຄວາມປອດໄພ ແລະ ມີປະສິດທິພາບສູງ.
ຍັງມີການປິ່ນປົວທີ່ມີປະສິດທິພາບສໍາລັບຜູ້ທີ່ຢູ່ກັບພະຍາດຕັບອັກເສບ B ຊໍາເຮື້ອ.

## ພະຍາດຕັບອັກເສບ B ຕາມຈໍານວນ

ໃນໂລກ:

- 1.5 ລ້ານຄົນຈະຕິດເຊື້ອ
- 296 ລ້ານຄົນໃນທົ່ວໂລກຕິດເຊື້ອພະຍາດຕັບອັກເສບ B ແບບຊໍາເຮື້ອ
- 820,000 ຄົນເສຍຊີວິດໃນແຕ່ລະປີ - 1 ຄົນໃນທຸກໆ 30 ວິນາທີ - ຈາກພະຍາດຕັບອັກເສບ B ທີ່ເປັນມະເຮັງຕັບ

ໃນສະຫະລັດ:

- ປະມານ 20,000 ຄົນຈະຕິດເຊື້ອໃໝ່
- ມີຊາວອາເມລິກາເຖິງ 2.4 ລ້ານຄົນຕິດເຊື້ອພະຍາດຕັບອັກເສບ B ແບບຊໍາເຮື້ອ
- ຫຼາຍພັນຄົນເສຍຊີວິດຍ້ອນພະຍາດຕັບອັກເສບ B ແລະ ອາການແຊກຊ້ອນຂອງມັນຢ່າງເຊັ່ນ ມະເຮັງຕັບ

## ພະຍາດຕັບອັກເສບ B ສາມາດປ້ອງກັນໄດ້ບໍ?

ແມ່ນ! ຖາມທ່ານໝໍຂອງທ່ານກ່ຽວກັບວັກຊີນປ້ອງກັນພະຍາດຕັບອັກເສບ B ທີ່ໃຊ້ປອດໄພ ແລະ ມີປະສິດທິພາບ ແລະ ສາມາດປົກປ້ອງຕົວທ່ານເອງ ແລະ ຄົນທີ່ທ່ານຮັກໄດ້ຕະຫຼອດຊີວິດ. Centers for Disease Control and Prevention (CDC, ສູນຄວບຄຸມ ແລະ ປ້ອງກັນພະຍາດ) ແນະນໍາໃຫ້ເດັກເກີດໃໝ່, ເດັກນ້ອຍ, ຜູ້ໃຫຍ່ທີ່ມີອາຍຸເຖິງ 59 ປີ, ແລະ ຜູ້ໃຫຍ່ 60 ປີຂຶ້ນໄປທີ່ມີຄວາມສ່ຽງສູງຕໍ່ການຕິດເຊື້ອຄວນໄດ້ຮັບວັກຊີນ ປ້ອງກັນພະຍາດຕັບອັກເສບ B. ປະເທດອື່ນນອກເໜືອຈາກສະຫະລັດ, World Health Organization (ອົງການອະນາໄມໂລກ) ແນະນໍາໃຫ້ເດັກເກີດໃໝ່, ເດັກນ້ອຍ, ໄວໜຸ່ມທີ່ມີອາຍຸເຖິງ 18 ປີ ແລະ ຜູ້ໃຫຍ່ທີ່ມີຄວາມສ່ຽງສູງທຸກຄົນຄວນໄດ້ຮັບວັກຊີນປ້ອງກັນ. ຈໍາໄວ້ວ່າໃຊ້ໄດ້ພຽງແຕ່ສອງສາມເຂັມເພື່ອການປ້ອງກັນຕະຫຼອດຊີວິດ!

Hepatitis B Foundation

ແມ່ນອົງການບໍ່ຫວັງຜົນກໍາໄລແຫ່ງຊາດ ທີ່ອຸທິດຕົນເພື່ອຊອກຫາວິທີປິ່ນປົວ ແລະ ປັບປຸງຄຸນນະພາບຊີວິດຂອງຜູ້ ໄດ້ຮັບຜົນກະທົບຈາກພະຍາດຕັບອັກເສບ B ໃນທົ່ວໂລກ.

HEPATITIS B FOUNDATION

www.hepb.org | 215-489-4900

## ພະຍາດຕັບອັກເສບ B ມີການແຜ່ເຊື້ອໄດ້ແນວໃດ?

ພະຍາດຕັບອັກເສບ B ແມ່ນຕິດຕໍ່ຜ່ານເລືອດທີ່ຕິດເຊື້ອ ແລະ ຂອງແຫຼວໃນຮ່າງກາຍ. ພະຍາດນີ້ສາມາດເກີດຂຶ້ນໄດ້ໂດຍການສໍາພັດເລືອດກັບເລືອດໂດຍກົງ, ການມີເພດສຳພັນທີ່ບໍ່ໄດ້ປ້ອງກັນ, ການໃຊ້ຢາທີ່ຜິດກົດໝາຍ ແລະ ຈາກແມ່ຍິງທີ່ຕິດເຊື້ອໄປຫາເດັກເກີດໃໝ່ໃນລະຫວ່າງການຖືພາ ຫຼື ການເກີດລູກ.

**ພະຍາດຕັບອັກເສບ B ສາມາດແຜ່ໄດ້ຈາກ:**

- ການສໍາພັດໂດຍກົງກັບເລືອດທີ່ມີການຕິດເຊື້ອ
- ການມີເພດສໍາພັນທີ່ບໍ່ມີການປ້ອງກັນ
- ເຂັມເປື້ອນ ຫຼື ບໍ່ໄດ້ຮັບການຂ້າເຊື້ອ (ການໃຊ້ຢາສັກເຂົ້າເສັ້ນເລືອດດໍາ, ເຂັມສັກຢາ/ເຈາະເລືອດ)
- ອາໄສຢູ່ໃນຄົວເຮືອນກັບຜູ້ຕິດເຊື້ອ ແມ່ທີ່ຕິດເຊື້ອໄປສູ່ລູກເກີດໃໝ່
- ໃນເວລາຖືພາ ຫຼື ເວລາເກີດລູກ
- ຮ່ວມໃຊ້ມີດໂກນ, ແປງຖູແຂ້ວ, ມີດຕັດເລັບ, ຕຸ້ມຫູ, ຫຼື ເຄື່ອງປະດັບຮ່າງກາຍກັບຜູ້ຕິດເຊື້ອ
- ການຖືກກັດຂອງມະນຸດຈາກຜູ້ຕິດເຊື້ອ ເຄື່ອງມືທີ່ບໍ່ໄດ້ຂ້າເຊື້ອທີ່ໃ
- ຊ້ໂດຍໝໍປົວແຂ້ວ, ທ່ານໝໍ ແລະ ຊ່າງຕັດຜົມ

**ພະຍາດຕັບອັກເສບ B ບໍ່ສາມາດແຜ່ໄດ້ຈາກ:**

- ຈູບແກ້ມ ຫຼື ຮີມປາກ
- ການໄອ ຫຼື ຈາມ
- ການສໍາພັດກັບຕົວຄົນຢ່າງເຊັ່ນ ການກອດກັນ ຫຼື ການຈັບມື
- ການກິນອາຫານທີ່ຕຽມໂດຍ ຫຼື ການກິນອາຫານຮ່ວມກັບຜູ້ຕິດເຊື້ອ



## ໃຜມີຄວາມສ່ຽງທີ່ຈະເປັນພະຍາດຕັບອັກເສບ B ຫຼາຍທີ່ສຸດ?

- ເດັກນ້ອຍທີ່ເກີດຈາກແມ່ທີ່ຕິດເຊື້ອ HBV
- ຜູ້ທີ່ຢູ່ໃນຄອບຄົວໃກ້ຊິດສໍາພັດກັບຜູ້ຕິດເຊື້ອຊໍາເຮື້ອ
- ເດັກນ້ອຍທີ່ໄດ້ຮັບການລ້ຽງຈາກປະເທດທີ່ມີ HBV ແຜ່ລາມຫຼາຍ
- ບຸກຄົນທີ່ມີເພດສໍາພັນແບບບໍ່ໄດ້ປ້ອງກັນ ຫຼື ມີຄູ່ຮ່ວມເພດຫຼາຍກວ່າໜຶ່ງຄົນພາຍໃນໄລຍະເວລາ 6 ເດືອນ
- ຜູ້ທີ່ໄດ້ຮັບການບົ່ງມະຕິພົບວ່າເປັນພະຍາດຕິດຕໍ່ທາງເພດສໍາພັນ (STD)
- ຜູ້ຊາຍທີ່ມີເພດສໍາພັນກັບຜູ້ຊາຍ
- ບຸກຄົນຜູ້ທີ່ຮ່ວມໃຊ້ເຂັມ ແລະ ເຂັມສັກຢາ ຜູ້ໃຫ້ບໍລິການດ້ານສຸຂະພາບ ແ
- ລະ ຜູ້ຕອບສະໜອງສຸກເສີນ ບຸກຄົນທີ່ກໍາລັງເຂົ້າຮັບການຟອກໝາກໄຂ່ຫຼັງ
- ບຸກຄົນທີ່ອາໄສຢູ່ ຫຼື ເຮັດວຽກຢູ່ໃນສະຖາບັນ ເຊັ່ນ ຄຸກ ຫຼື ບ້ານເປັນກຸ່ມ

## ແຫຼ່ງໃຫ້ການຊ່ວຍເຫຼືອພະຍາດຕັບອັກເສບ B ເພີ່ມເຕີມ (ເປັນພາສາອັງກິດ)

- Hepatitis B Foundation: http://www.hepb.org
- ພະແນກຮັກສາພະຍາດໄວຣັສຕັບອັກເສບ ຂອງ CDC: https://www.cdc.gov/hepatitis/
- World Health Organization: http://www.who.int/mediacentre/factsheets/fs204/en/
- Immunization Action Coalition: http://www.immunize.org

Hepatitis B Foundation
ແມ່ນອົງການບໍ່ຫວັງຜົນກໍາໄລແຫ່ງຊາດ ທີ່ອຸທິດຕົນເພື່ອຊອກຫາວິທີປິ່ນປົວ ແລະ ປັບປຸງຄຸນນະພາບຊີວິດຂອງຜູ້ ໄດ້ຮັບຜົນກະທົບຈາກພະຍາດຕັບອັກເສບ B ໃນທົ່ວໂລກ.